WYSS ACADEMY FOR NATURE

# ບົດລາຍງານປະຈຳປີ

# 2024





ສປປ ລາວ

# ການປົກປັກຮັກສາ ເພື່ອທຳມະຊາດ ແລະ ປະຊາຊົນໃນບໍລິເວນປ່າ

## ການແກ້ໄຂບັນຫາໃນພູມສັນຖານ "ການປົກປັກຮັກສາ ເພື່ອທຳມະຊາດ ແລະ ປະຊາຊົນໃນບໍລິເວນປ່າ" ໃນເຂດປ່າປ້ອງກັນອ່າງນ້ຳຕຽນ ແຂວງໄຊຍະບູລີ ປະເທດລາວ

ຜົນກະທົບຈາກການຂະຫຍາຍຕົວດ້ານການກະສິກຳ ທີ່ບໍ່ໄດ້ຮັບການຄຸ້ມຄອງຢ່າງທົ່ວເຖິງ ເຮັດໃຫ້ການປົກຫຸ້ມປ່າໄມ້ໃນປະຈຸບັນ ໃນເຂດປ່າປ້ອງກັນອ່າງນ້ຳຕຽນ ເຫລືອພຽງ 40 ສ່ວນຮ້ອຍຂອງພື້ນທີ່. ພາກລັດທັງຂັ້ນທ້ອງຖິ່ນ ແລະ ສູນກາງ ມີໜ້າທີ່ຮັບຜິດຊອບໃນການຄຸ້ມຄອງເຂດດັ່ງກ່າວ ແຕ່ເນື່ອງຈາກການຂາດແຄນດ້ານຊັບພະຍາກອນ, ຄວາມອາດສາມາດ ແລະ ການບັງຄັບໃຊ້ກົດຫມາຍຍັງບໍ່ທັນເຂັ້ມງວດເທົ່າທີ່ຄວນ. ຜົນທີ່ຕາມມາແມ່ນເຮັດໃຫ້ພື້ນທີ່ປ່າໄມ້ຖືກທຳລາຍ ແລະ ກາຍເປັນພື້ນທີ່ສຳລັບການຜະລິດກະສິກຳ ທີ່ການປະຕິບັດການກວດກາຍັງບໍ່ທົ່ວເຖິງ ແລະ ບໍ່ຍືນຍົງ ຮ່ວມກັບຊາວກະສິກອນໃນການປູກພືດຊະນິດຕ່າງໆເຊັ່ນ: ສາລີ, ມັນຕົ້ນ, ກ້ວຍ, ຫມາກໂມ ແລະ ຢາງພາລາ ເຊິ່ງກໍ່ໃຫ້ເກີດຜົນກະທົບຫລາຍຢ່າງເຊັ່ນ ການສູນເສຍສັດປ່າ, ການເຊາະເຈື່ອນຂອງດິນ, ມົນລະພິດທາງນ້ຳ ແລະ ການກີດຂວາງທາງໄຫລຂອງນ້ຳ. ພ້ອມດຽວກັນນັ້ນ, ຊາວກະສິກອນ ຜູ້ທີ່ອາໃສແຫລ່ງລາຍຮັບຈາກການປູກພືດດັ່ງກ່າວ ແມ່ນປະສົບບັນຫາການປ່ຽນແປງລາຄາ-ລາຍຮັບທີ່ບໍ່ຫມັ້ນຄົງ. ຍິ່ງໄປກວ່ານັ້ນ, ນັກລົງທຶນຕ່າງປະເທດ ໄດ້ແນໃສ່ການຫັນປ່ຽນພື້ນທີ່ປ່າໄມ້ໃນເຂດດັ່ງກ່າວ ເປັນພື້ນທີ່ຜະລິດກະສິກຳຂະຫນາດໃຫຍ່, ເຊິ່ງໄດ້ສ້າງຄວາມກົດດັນຫຼາຍ ຕໍ່ການນຳໃຊ້ພື້ນທີ່ ແລະ ເປັນສິ່ງທ້າທາຍສຳລັບຊຸມຊົນໃນທ້ອງຖິ່ນ.

ເພື່ອຈັດການກັບບັນຫາດັ່ງກ່າວ, Wyss Academy ໄດ້ເຮັດວຽກຮ່ວມກັບລັດຖະບານໃນທ້ອງຖິ່ນ, ຊຸມຊົນ, ຕົວແທນພາກເອກະຊົນ ແລະ ບັນດານັກຄົ້ນຄວ້າ ເພື່ອພັດທະນາວິທີການແກ້ໄຂບັນຫາ ທີ່ປ້ອງກັນ ແລະ ຟື້ນຟູທຳມະຊາດ ໃນຂະນະດຽວກັນກໍ່ສະຫນັບສະຫນູນປະຊາຊົນຜູ້ທີ່ອາໄສທີ່ດິນ ແລະ ຊັບພະຍາກອນໃນພື້ນທີ່ດັ່ງກ່າວໃນການດຳລົງຊີບ. ໂຄງການໄດ້ດຳເນີນມາຢ່າງຕໍ່ເນື່ອງ ແລະເຊື່ອມໂຍງກັບຫລາຍໂຄງການ ທີ່ສຸມໃສ່ການພັດທະນາບັນດາຮູບແບບທຸລະກິດໃຫມ່ ເພື່ອອານຸລັກ ແລະ ເຮັດວຽກໃນການຄຸ້ມຄອງ ຂອບເຂດປ່າປ້ອງກັນຮ່ວມກັນ.

ພວກເຂົາຍັງໄດ້ທົດລອງດ້ານນະວັດຕະກຳ ຫລາຍຢ່າງ ເພື່ອຟື້ນຟູການປົກຫຸ້ມຂອງປ່າໄມ້ ດ້ວຍເຕັກນິກການປູກແບບກະສິກຳ-ປ່າໄມ້ ແລະ ສ້າງທາງເລືອກໃນການສ້າງລາຍຮັບທີ່ເປັນມິດກັບທຳມະຊາດ ສຳລັບຊຸມຊົນ ໂດຍການປະສົມປະສານລະຫວ່າງເຕັກໂນໂລຢີ, ການຕະຫລາດ ແລະ ຜົນການສຶກສາຄົ້ນຄວ້າ ເຂົ້ານຳກັນ. ຜ່ານການເຮັດວຽກຮ່ວມກັບທັງຄົນຮຸ້ນປະຈຸບັນ ແລະ ຮຸ້ນໃຫມ່, ໂຄງການນີ້ໄດ້ເຕົ້າໂຮມເອົາບັນດາຜູ້ທີ່ມີສ່ວນຮ່ວມທີ່ມີຄວາມຫລາກຫລາຍ ມາເຮັດວຽກຮ່ວມກັນໃນການຊຸກຍູ້ໃຫ້ເກີດຜົນໄລຍະຍາວ.

**ພາບຖ່າຍດາວທຽມຂອງຂອບເຂດປ່າປ້ອງກັນນ້ຳຕຽນໃນ ສປປ ລາວ ສະແດງໃຫ້ເຫັນພູມສັນຖານທີ່ສະຫລັບຊັບຊ້ອນ ຂອງສາຍນ້ຳ ແລະ ທີ່ດິນກະສິກຳ. ຈຸດເດັ່ນຂອງພາບດັ່ງກ່າວແມ່ນສະແດງເຖິງຄວາມລະອຽດອ່ອນລະຫວ່າງການນຳໃຊ້ທີ່ດິນ ແລະ ການອະນຸລັກທີ່ຈຳເປັນສຳລັບການດຳລົງຊີວິດແບບຍືນຍົງ ແລະການຮັກສາລະບົບນິເວດ.**
ແຫລ່ງທີ່ມາຂອງຮູບພາບ : Planet Labs PBC (2024)

## ພື້ນທີ່ເຮັດວຽກຂອງພວກເຮົາ

- ສຳນັກງານ: ບາງກອກ
- ໂຄງການອື່ນໆ (ຮ່ວມມືກັບໂຄງການ Tree4All-ຕົ້ນໄມ້ຂອງພວກເຮົາ): ເມືອງສັນຕິສຸກ
- ການແກ້ໄຂບັນຫາໃນພູມສັນຖານ




## ການແກ້ໄຂບັນຫາໃນພູມສັນຖານ

- ເຂດແດນຂອງການແກ້ໄຂບັນຫາໃນພູມສັນຖານ
- ພື້ນທີ່ຂອງການແກ້ໄຂບັນຫາໃນພູມສັນຖານ
- ຂອບເຂດແຂວງ
- ຂອບເຂດປະເທດ




## ຂໍ້ມູນສຳຄັນ

**ຄູ່ຮ່ວມງານທັງພາຍໃນ ແລະ ຕ່າງປະເທດ**

**40** ຫນ່ວຍງານ

**ກິດຈະກຳການມີສ່ວນຮ່ວມ**

**17** ກິດຈະກຳ

**ນັກຮຽນເຂົ້າເຖິງນ້ຳດື່ມສະອາດ ແລະ ປອດໄພ**

**1,316** ຄົນ



**ບັນດານ້ອງນ້ອຍນັກຮຽນໃນບໍລິເວນອ້ອມຂ້າງອ່າງນ້ຳຕຽນ ສປປ ລາວ ກຳລັງເຂົ້າຮ່ວມກິດຈະກຳການຈັດການສິ່ງເສດເຫລືອ ເຊິ່ງໄດ້ຮັບການສະຫນັບສະຫນູນຈາກຄູ່ຮ່ວມງານຂອງ Wyss Academy ກໍ່ຄືວິທະຍາໄລກະສິກຳ ແລະປ່າໄມ້ພາກເຫນືອ (ເມືອງປາກເຊືອງ, ແຂວງຫລວງພະບາງ)**
ແຫລ່ງທີ່ມາຂອງພາບ : Mongkon Duangkhiew

## ຄວາມສຳເລັດໃນປີ 2024

### ປູກຝັງເຍົາວະຊົນ-ໄວຫນຸ່ມ ແລະ ເຊື່ອມໂຍງກັບຊຸມຊົນໃນນ້ຳຕຽນ

ເຍົາວະຊົນໄວຫນຸ່ມ ໃນລາວ ມີບົດບາດສຳຄັນຫລາຍໃນການສົ່ງເສີມທັດສະນະ ແລະ ແນວທາງປະຕິບັດທີ່ຍືນຍົງ ເນື່ອງຈາກວ່າປະຊາກອນທີ່ມີອາຍຸຫນ້ອຍກວ່າ 25 ປີ ມີຈຳນວນຫລາຍເຖິງ 60 ສ່ວນຮ້ອຍໃນລາວ. Wyss Academy ຈຶ່ງຊອກຫາຜູ້ນຳດ້ານສິ່ງແວດລ້ອມຮຸ່ນໃຫມ່ໃນໄຊຍະບູລີ ເພື່ອເຮັດວຽກຮ່ວມນຳ ເພື່ອສົ່ງເສີມ ທັດສະນະ ແລະ ແນວທາງປະຕິບັດທີ່ຍືນຍົງ ໂດຍການຮ່ວມມືກັບຂະແຫນງຈຶ່ງສຶກສາຂັ້ນທ້ອງຖິ່ນ, ສະຖາບັນການສຶກສາ, ຜູ້ຊ່ຽວຊານດ້ານສິ່ງແວດລ້ອມ ແລະ ສູນອານຸລັກຊ້າງ Elephant Conservation Center (ECC), ໃນປີ 2024 ໄດ້ມີການລິເລີ່ມປະຕິບັດຫລາຍກິດຈະກຳ ໃນຫລາຍຮູບແບບ ເຊິ່ງໄດ້ສ້າງປະສົບການໃຫ້ກັບບັນດານັກຮຽນ ຈາກ 6 ໂຮງຮຽນໃນບໍລິເວນອ້ອມຂ້າງນ້ຳຕຽນ. ບັນດາກິດຈະກຳດັ່ງກ່າວ ເປັນສ່ວນຫນຶ່ງຂອງຄວາມພະຍາຍາມທີ່ຈະຂະຫຍາຍອອກເປັນວົງກວ້າງ ໂດຍການມີສ່ວນຮ່ວມກັບຊຸມຊົນໃນການແກ້ໄຂບັນຫາໃນພູມສັນຖານ ຜ່ານການສົ່ງເສີມສາຍສຳພັນຮ່ວມກັບຊຸມຊົນ ແລະ ການເຮັດວຽກອານຸລັກ ເພື່ອຈັດການພື້ນທີ່ຄຸ້ມຄອງຮ່ວມກັນ.

**ວິທະຍາໄລກະສິກຳ ແລະ ປ່າໄມ້ ພາກເຫນືອ**

ໄດ້ຮັບການສະຫນັບສະຫນູນໂຄງການດັ່ງກ່າວ ໃນການຈັດຕັ້ງປະຕິບັດໃນບັນດາໂຮງຮຽນໃນເຂດນ້ຳຕຽນ ໂດຍການສ້າງລະບົບການຈັດການສິ່ງເສດເຫລືອ ທີ່ຫລຸດຜ່ອນມົນລະພິດທາງອາກາດໂດຍການເຜົາໄຫມ້ ພ້ອມດຽວກັນນັ້ນກໍ່ຍັງໄດ້ ສະຫນັບສະໜູນການສ້າງສວນຜັກ ຂອງໂຮງຮຽນ ເພື່ອໃຫ້ນັກຮຽນໄດ້ເຂົ້າໃຈຕໍ່ຂະບວນການຜະລິດອາຫານທີ່ປອດໄພ ແລະ ດີຕໍ່ສຸຂະພາບ. ນອກນີ້, ສາມາດເວົ້າໄດ້ວ່າ ຊ້າງ ເປັນສັດທີ່ມີຄວາມສຳຄັນທາງດ້ານວັດທະນະທຳ ແລະ ເປັນສັນຍາລັກຂອງປະເທດລາວ, ການໄປທັດສະນະແລກປ່ຽນ ຢູ່ສູນອານຸລັກຊ້າງ ກໍໄດ້ໃຫ້ປະສົບການທີ່ໜ້າຈົດຈຳ, ເຮັດໃຫ້ນັກຮຽນໄດ້ເຫັນຊ້າງ ຢ່າງໃກ້ຊິດ ແລະ ໄດ້ຮຽນຮູ້ວິຖີການດຳລົງຊີວິດຂອງຊ້າງ ທີ່ເປັນອິດສະຫລະ ໃນປ່າໄມ້ທີ່ມີຄວາມອຸດົມສົມບູນ.

ໃນລະດັບພາກພື້ນ, ອົງກອນ Field Alliance ເຊິ່ງແມ່ນຄູ່ຮ່ວມງານຈາກປະເທດໄທ ໄດ້ຝຶກອົບຮົມໃຫ້ບັນດາຄູ-ອາຈານໃນບັນດາໂຮງຮຽນ ໂດຍການຮຽນຮູ້ ອີງໃສ່ພາກປະຕິບັດ ກ່ຽວກັບຫົວຂໍ້ດ້ານສິ່ງແວດລ້ອມເຊັ່ນ: ຄວາມຫລາກຫລາຍດ້ານຊີວະນາໆພັນ ແລະການປ່ຽນແປງຂອງດິນຟ້າອາກາດ. ທ້າຍນີ້, Wyss Academy ໄດ້ສະຫນັບສະຫນູນການປັບປຸງສິ່ງອຳນວຍຄວາມສະດວກຕ່າງໆພາຍໃນໂຮງຮຽນ ເພື່ອຊ່ວຍໃຫ້ຄູອາຈານສາມາດນຳໃຊ້ບັນດາບົດຮຽນຈາກ ສື່ອອນລາຍ ແລະ ສື່ຫລາກຫລາຍຮູບແບບໃນຫ້ອງຮຽນ ພ້ອມທັງປັບປຸງສະພາບແວດລ້ອມໃຫ້ດີຂຶ້ນ. ນອກນັ້ນ, ຍັງໄດ້ຕິດຕັ້ງເຄື່ອງກອງນ້ຳດື່ມຢູ່ໃນບັນດາໂຮງຮຽນ ເພື່ອສະຫນອງນ້ຳດື່ມທີ່ສະອາດ ປອດໄພໃຫ້ແກ່ນັກຮຽນ 1,316 ຄົນ ແລະ ຄູອາຈານ 83 ຄົນ, ພ້ອມດຽວກັນກໍ່ເປັນການຫຼຸດຜ່ອນການນຳໃຊ້ກະຕຸກນ້ຳດື່ມພາສຕິກ. ໃນປີ 2024 ເຄື່ອຂ່າຍຂອງ ບັນດາໂຮງຮຽນ ທີ່ໄດ້ການປັບປຸງສິ່ງອຳນວຍຄວາມສະດວກໃນໂຮງຮຽນ, ບັນດາໂຮງຮຽນເຄືອຂ່າຍ ແລະ ຄູ່ຮ່ວມງານໄດ້ຖືກສ້າງຂຶ້ນ ແລະ ຈະສືບຕໍ່ເປັນພື້ນຖານໃນການຜັນຂະຫຍາຍວຽກງານໃນຕໍ່ຫນ້າ ໂດຍການມີສ່ວນຮ່ວມຂອງໄວໜຸ່ມຕື່ມອີກ.



**ການປະຊຸມຮ່ວມກັບຄູ່ຮ່ວມງານທັງພາຍໃນ ແລະ ຕ່າງປະເທດ ທີ່ສູນບໍລິການເຕັກນິກກະສິກຳອັງອ້າ ເມືອງ ແລະ ແຂວງໄຊຍະບູລີ, ສປປ ລາວ ເພື່ອອອກແບບຮູບແບບກະສິກຳ-ປ່າໄມ້ຮ່ວມກັນ.**
ແຫລ່ງທີ່ມາຂອງພາບ : Chertalay Suwanpanich

## ຮັດແຄບຊ່ອງຫວ່າງການຟື້ນຟູ ດ້ວຍການຮ່ວມມືກັນ

ໃນເຂດຊົນນະບົດ ແຂວງໄຊຍະບູລີ, ຊຸມຊົນທ້ອງຖິ່ນ ແລະ ລັດຖະບານ ຍັງມີຊັບພະຍາກອນບໍ່ພຽງພໍທີ່ຈະເຂົ້າເຖິງການສ້າງທາງເລືອກໃນການດຳລົງຊີວິດ ທີ່ສາມາດສະກັດກັ້ນການທຳລາຍປ່າໄດ້. ການຮ່ວມມືທີ່ເຂັ້ມແຂງ ເປັນສິ່ງຈຳເປັນເພື່ອຮັດແຄບຊ່ອງຫວ່າງ ແລະ ເອົາຊະນະ ຂໍ້ຈຳກັດໃນການເຂົ້າເຖິງຄວາມຮູ້ໃນການຟື້ນຟູ, ຕະຫຼາດທີ່ມີຄວາມຫຼາກຫຼາຍ ນອກຈາກຕະຫລາດຂອງພືດເສດຖະກິດ ແລະ ການສາຍສຳພັນກັບຜູ້ມີສ່ວນຮ່ວມ ທັງພາຍໃນ ແລະ ສາກົນ.
ໃນປີ 2024, ກອງປະຊຸມດ້ານວິຊາການ ໄດ້ຖືກຈັດຂຶ້ນເພື່ອຮ່ວມກັນອອກແບບ ຈາກຫລາກຫລາຍພາກສ່ວນເຊັ່ນ: ພະນັກງານລັດຖະກອນ, ນັກວິຊາການ, ຕາງຫນ້າຈາກພາກເອກະຊົນ ແລະ ຊຸມຊົນທ້ອງຖິ່ນ. ພວກເຂົາ ໄດ້ວິເຄາະວິທີການທີ່ເປັນໄປໄດ້ເພື່ອທົດສອບການເຮັດກະສິກຳແບບເປັນມິດຕໍ່ ທຳມະຊາດ ແລະ ສ້າງ ວິໄສທັດໃຫມ່ ເຊື່ອມໂຍງກັບກະສິກຳ-ປ່າໄມ້ ແລະ ຜະລິດຕະພັນເຄື່ອງປ່າຂອງດົງຜະລິດ ເຂົ້າສູ່ການຜະລິດກະສິກຳໃນປັດຈຸບັນ. ສະນັ້ນ, ຈຶ່ງເປັນ ການປະສົມປະສານຫລາຍອົງປະກອບ ທີ່ຊ່ວຍໃນການຟື້ນຟູປ່າໄມ້ ແລະ ຄວາມຫລາກຫລາຍທາງດ້ານຊີວະນາໆພັນ. ເປົ້າຫມາຍສຸດທ້າຍແມ່ນເພື່ອສຳລັບຊຸມຊົນທ້ອງຖິ່ນ ໃນການຜະລິດ ແລະ ຂາຍ ຜະລິດຕະພັນທີ່ມີມູນຄ່າສູງ ຈາກພື້ນທີ່ດັ່ງກ່າວ ຢ່າງຍືນຍົງ ທັງວິຖີຊີວິດການເປັນຢູ່ຂອງເຂົາເຈົ້າ ແລະ ສິ່ງແວດລ້ອມທຳມະຊາດ.

ໃນພັນທະມິດນີ້, ບັນດາຄູ່ຮ່ວມງານທັງຫມົດແມ່ນ ມີບົດບາດສຳຄັນ. ສະຖາບັນພຶກສາສາດຄຸນໝິງ ສະຫນັບສະຫນູນ ລັດຖະກອນວິຊາການດ້ານກະສິກຳ ແລະ ປ່າໄມ້ ໃນການທົດລອງຫາພັນໄມ້ທີ່ເຫມາະສົມ ສຳລັບການເຮັດກະສິກຳ-ປ່າໄມ້ ກັບຊຸມຊົນທ້ອງຖິ່ນ, ຍົກລະດັບຄວາມຮູ້ຂອງເຂົາເຈົ້າຕໍ່ການຕະຫຼາດທີ່ດີ ສຳລັບຜະລິດຕະພັນທີ່ຍືນຍົງດ້ານສິ່ງແວດລ້ອມໃນ ສປ ຈີນ. ຄູ່ຮ່ວມງານທີ່ເປັນນັກຄົ້ນຄວ້າທ້ອງຖິ່ນ ໄດ້ສຳຫຼວດການລົງທຶນຂອງນັກລົງທຶນກະສິກຳໃນປະຈຸບັນ ແລະ ກຳນົດໂອກາດໃຫມ່ໃນຕະຫຼາດ ສຳລັບບັນດາຜະລິດຕະພັນ. Wyss Academy ສູນປະຈຳອາຊີຕາ ເວັນອອກສ່ຽງໃຕ້ ໄດ້ຈັດການແລກປ່ຽນລະຫວ່າງຄູ່ຮ່ວມງານລະຫວ່າງລາວ, ໄທ ແລະ ຈີນ ເພື່ອໃຫ້ຊ່ຽວຊານດ້ານກະສິກຳ-ປ່າໄມ້ ໄດ້ມີການແລກປ່ຽນປະສົບການໃນການພັດທະນາຕະຫຼາດ. ນັກຄົ້ນຄວ້າການປົກຄອງສິ່ງແວດລ້ອມຂອງ Wyss Academy ຮ່ວມມືກັບມະຫາວິທະຍາໄລແຫ່ງຊາດ ໄດ້ປະຕິບັດການປະເມີນຂໍ້ມູນພື້ນຖານທີ່ຊ່ວຍໃຫ້ ການຕິດຕາມຜົນກະທົບໃນອານາຄົດຕໍ່ຊີວິດການເປັນຢູ່ ແລະ ສິ່ງແວດລ້ອມ. ພັນທະມິດນີ້ແມ່ນກຽມພ້ອມສຳລັບຂັ້ນຕອນຕໍ່ໄປຂອງ ການທົດລອງກະສິກຳ: ການຄັດເລືອກສາຍພັນການກະສິກຳ-ປ່າໄມ້ ທີ່ເຫມາະສົມ, ການສ້າງສວນສາທິດການປູກແບບກະສິກຳ-ປ່າໄມ້, ແລະ ດຳເນີນການເຜີຍແຜ່ເພື່ອໃຫ້ພາກເອກະຊົນເຂົ້າຮ່ວມ ໂດຍເຊື່ອມໂຍງກັບຊຸມຊົນເຂົ້າກັບຕະຫຼາດເພື່ອ ຜະລິດຕະພັນກະສິກຳ-ປ່າໄມ້ ແລະ ຜະລິດຕະພັນປ່າໄມ້ໃນປີ 2025, ເພື່ອເຮັດໃຫ້ວິໄສທັດດ້ານຄວາມຍືນຍົງ ປະກົດຜົນເປັນຈິງ.



**ສູນອານຸລັກຊ້າງ (ECC) ທີ່ອ່າງນ້ຳຕຽນ ສປປ ລາວ, ຜູ້ຊ່ຽວຊານຈາກທົ່ວໂລກ ໄດ້ລວມຕົວກັນເພື່ອລະດົມຄວາມຄິດ ສຳລັບກິດຈະກຳ ເພື່ອການສຶກສາ, ການອານຸລັກ ແລະ ການຄົ້ນຄວ້າ (Education, Conservation & Reseach - ECORE)**
ແຫລ່ງທີ່ມາຂອງພາບ : Khamla Lao

## ເຊື່ອມໂຍງກັບນັກຄົ້ນຄວ້າທ້ອງຖິ່ນກັບສາກົນໃນການອານຸລັກຊຸມຊົນ

ສູນອານຸລັກຊ້າງ (ECC) ເປັນຜູ້ນຳດ້ານການທ່ອງທ່ຽວ ເຊີງນິເວດ ໃນໄຊຍະບູລີ ແລະ ສປປ ລາວ ເປັນຫນຶ່ງໃນຄູ່ຮ່ວມງານຫລັກຂອງ Wyss Academy ທີ່ມີອຸດົມການເພື່ອການປ່ຽນແປງພື້ນທີ່ໃນເຂດປ່າປ້ອງກັນອ່າງນ້ຳຕຽນ. ສູນອານຸລັກຊ້າງ (ECC) ໄດ້ສຳປະທານທີ່ດິນຫລາຍກວ່າ 540 ເຮັກຕາ, ໃນນັ້ນ 70 ສ່ວນຮ້ອຍ ແມ່ນພື້ນທີ່ປ່າໄມ້. ຕະຫລອດເວລາ 15 ປີທີ່ຜ່ານມາ, ສູນອານຸລັກຊ້າງ (ECC) ໄດ້ສ້າງຖານຂໍ້ມູນອັນມີຄ່າ ແລະ ເປັນແຫລ່ງທີ່ຢູ່ອາໄສ ທີ່ສະຫງວນໃຫ້ກັບຊ້າງປ່າ ແລະ ຊ້າງບ້ານໃນລາວ.  ແຕ່ທາງສູນໄດ້ປະສົບບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ ນັບແຕ່ການແຜ່ລະບາດຂອງພະຍາດໂຄວິດເປັນຕົ້ນມາ ເນື່ອງຈາກການສະຫນັບສະຫນູນງົບປະມານຂ້ອນຂ້າງມີຈຳກັດ ເພື່ອສະຫນັບສະຫນູນວຽກງານສຳຄັນຂອງເຂົາເຈົ້າໃນການອານຸລັກ ແລະ ສ້າງຄວາມອາດສາມາດໃຫ້ຊຸມຊົນທ້ອງຖິ່ນ.

ວຽກງານຂອງ ສູນອານຸລັກຊ້າງ (ECC) ເປັນວຽກງານທີ່ສຳຄັນໃນຂອບເຂດປ່າສະຫງວນນ້ຳຕຽນ, ການຮ່ວມມື ແລະ ສະໜັບສະໜູນຕໍ່ສູນອານຸລັກຊ້າງ (ECC)  ແມ່ນຂອດການຮ່ວມມືທີ່ສຳຄັນ ກັບຫລາຍພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ສາກົນ ໃນການອະນຸລັກທຳມະຊາດໃນການແກ້ໄຂບັນຫາໃນພູມສັນຖານນີ້.

ໃນປີ 2024, Wyss Academy ໄດ້ຮ່ວມລິເລີ່ມອອກແບບພັດທະນາກິດຈະກຳດ້ານການສຶກສາ, ການອະນຸລັກ ແລະການຄົ້ນຄວ້າ (ECORE) ກັບ ສູນອານຸລັກຊ້າງ (ECC) ເພື່ອໃຫ້ເປັນພື້ນຖານໃຫ້ນັກຄົ້ນຄວ້າໃນທ້ອງຖິ່ນ, ພາກພື້ນ ແລະ ສາກົນ ມີຂໍ້ມູນການສຶກສາຄົ້ນຄວ້າ ສຳລັບໄລຍະກາງ ແລະໄລຍະຍາວ, ໂດຍນຳໃຊ້ພື້ນທີ່ ທີ່ມີຄວາມເປັນເອກະລັກສະເພາະຕົວຂອງ ສູນອານຸລັກຊ້າງ (ECC). ນັກວິທະຍາສາດ ແລະ ຜູ້ຊ່ຽວຊານທັງໝົດ 22 ຄົນຈາກ 9 ປະເທດ ແລະ 15 ສະຖາບັນໄດ້ເຂົ້າຮ່ວມກອງປະຊຸມວິຊາການເປັນເວລາ 5 ວັນ ເຊິ່ງພວກເຂົາເຈົ້າໄດ້ພັດທະນາໂຄງຮ່າງເບື້ອງຕົ້ນສຳລັບແຜນການໄລຍະຍາວເພື່ອສ້າງຕັ້ງ ECORE. ໃນນັ້ນມີພະນັກງານ 3 ຄົນຈາກ Wyss Academy for Nature ທີ່ປະຈຳຢູ່ເບີນ, ເຄັນຢາ ແລະໄທ. ໃນປັດຈຸບັນ, ກິດຈະກຳ ແລະ ຫຼັກສູດ ຊຸດທຳອິດ ໄດ້ຖືກພັດທະນາ, ນັກສຶກສາຕ່າງປະເທດ ແລະ ນັກຄົ້ນຄວ້າຈະໄປຢ້ຽມຢາມ ສູນອານຸລັກຊ້າງ (ECC)  ໃນປີ 2025.

ເປົ້າໝາຍໄລຍະຍາວແມ່ນເພື່ອຫັນ ສູນອານຸລັກຊ້າງ (ECC) ໃຫ້ເປັນພື້ນທີ່ລະດັບພູມິພາກໃນການດຳເນີນການຄົ້ນຄວ້າກ່ຽວກັບການອະນຸລັກ ແລະ ສິ່ງແວດລ້ອມ ລວມທັງກະສິກຳ ແລະ ປ່າໄມ້. ອີກປະການໜຶ່ງ ແມ່ນເພື່ອສືບຕໍ່ພັດທະນາພື້ນທີ່ຄົ້ນຄວ້າກັບບັນດາຄູ່ຮ່ວມມືທັງພາຍໃນ ແລະ ຕ່າງປະເທດ, ນຳໃຊ້ພື້ນທີ່ ທີ່ສຳປະທານ ແລະ ປ່າປ້ອງກັນອ່າງນ້ຳຕຽນ ເປັນບ່ອນຄົ້ນຄວ້າຫລັກ. ECORE ຈະບໍ່ພຽງແຕ່ສ້າງການຄົ້ນຄວ້າ ແລະ ການຄົ້ນພົບໃຫມ່, ແຕ່ຍັງເຮັດໃຫ້ການຮ່ວມມືການ ລະຫວ່າງຂົ້ວໂລກເຫນືອ - ໃຕ້, ຄົ້ນຄວ້າແລກປ່ຽນ ແລະ ສ້າງຄວາມອາດສາມາດ ເຊິ່ງລວມມີການຮ່ວມມືກັບສະຖາບັນການສຶກສາຂອງລາວ, ສະໜັບສະໜູນນັກສຶກສາລາວໃນທ້ອງຖິ່ນ ແລະ ການເຊື່ອມໂຍງຄວາມພະຍາຍາມອະນຸລັກກັບຊຸມຊົນທ້ອງຖິ່ນ, ເຊິ່ງເປັນອີກບູລິມະສິດໜຶ່ງຂອງ ECORE.

# ພວກເຮົາຮ່ວມກັນ ສ້າງຄວາມສຳພັນແບບໃຫມ່ ລະຫວ່າງມະນຸດ ແລະ ທຳມະຊາດ



**Wyss Academy for Nature**
at the University of Bern
Kochergasse 4
3011 Bern

**www.wyssacademy.org**